ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 290 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 28 / 05 / 25

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງຄະນະກຳມະການແຫ່ງຊາດເພື່ອຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ໜັງສືສະເໜີຂອງ ຄະນະກຳມະການແຫ່ງຊາດເພື່ອຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 02/ຄຕຟງ, ລົງວັນທີ 23 ມັງກອນ 2025;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 48/ພນ, ລົງວັນທີ 11 ມີນາ 2025.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ທີ່ຕັ້ງ, ພາລະບົດບາດ, ຂອບເຂດສິດ, ໜ້າທີ່, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນການເຮັດວຽກ ຂອງຄະນະກຳມະການແຫ່ງຊາດເພື່ອຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອເປັນບ່ອນອີງໃນການຜັນຂະຫຍາຍ, ຕິດຕາມ, ກວດກາ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ແນໃສ່ເຮັດໃຫ້ລະບົບເສດຖະກິດ-ການເງິນ ມີຄວາມໝັ້ນຄົງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ສອດຄ່ອງກັບລະບຽບກົດໝາຍ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂຽນຫຍໍ້ດ້ວຍຕົວອັກສອນລາວວ່າ "ຄຕຟງ" ເປັນການຈັດຕັ້ງທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ໃນການ ປະສານງານ, ຕິດຕາມ, ກວດກາ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

## ໝວດທີ 2
## ຂອບເຂດສິດ ແລະ ໜ້າທີ່

**ມາດຕາ 3 ໜ້າທີ່**

ຄຕຟງ ມີໜ້າທີ່ ດັ່ງນີ້:

1. ພິຈາລະນາ ການສ້າງ ແລະ ການປັບປຸງລະບຽບກົດໝາຍ, ແຜນຍຸດທະສາດ, ນະໂຍບາຍ, ແຜນການ, ກົນໄກ ຫຼື ນິຕິກຳ ທີ່ກ່ຽວຂ້ອງກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ເພື່ອນຳສະເໜີ ຕໍ່ລັດຖະບານ;

2. ໂຄສະນາເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

3. ຮັບຮອງເອົາ ນິຕິກຳ, ແຜນຍຸດທະສາດ, ແຜນງານ-ໂຄງການ, ແຜນການເຄື່ອນໄຫວ, ແຜນດຳເນີນງານ ແຜນການປະກອບ-ກໍ່ສ້າງບຸກຄະລາກອນ ແລະ ແຜນງົບປະມານຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ເພື່ອຊີ້ນຳການຈັດຕັ້ງປະຕິບັດວຽກງານມະຫາພາກ ບົນພື້ນຖານຜົນປະໂຫຍດຂອງຊາດ;

4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ສາກົນ ໃນການຄວບຄຸມ, ກວດກາ ແລະ ຕີລາຄາການເຄື່ອນໄຫວວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຂອບເຂດທົ່ວປະເທດ;

5. ຊີ້ນຳການຄົ້ນຄວ້າ ແລະ ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາດັດແກ້ລະບຽບກົດໝາຍຕ່າງໆ ທີ່ພົວພັນກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

6. ກຳນົດເພີ່ມເຕີມກ່ຽວກັບບັນດາການກະທຳຜິດຕົ້ນ ແລະ ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕາມການສະເໜີຂອງສຳນັກງານຂໍ້ມູນຕ້ານການຟອກເງິນ;

7. ຊີ້ນຳ, ຊຸກຍູ້, ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ, ອົງການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

8. ພິຈາລະນາຮັບຮອງເອົາການຄົ້ນຄວ້າ ຫຼື ການປັບປຸງພາລະບົດບາດ, ສິດ ແລະ ໜ້າທີ່ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ຕາມການສະເໜີຂອງຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ;

9. ຊີ້ນຳທຸກໆ ການເຄື່ອນໄຫວ ແລະ ການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ໄດ້ຮັບຜົນດີ;

10. ສະຫຼຸບ ແລະ ລາຍງານການເຄື່ອນໄຫວຂອງຕົນ ຕໍ່ລັດຖະບານຢ່າງເປັນປົກກະຕິ;

11. ປະຕິບັດໜ້າທີ່ອື່ນໆ ຕາມກຳນົດໄວ້ໃນນິຕິກຳ ແລະ ການມອບໝາຍ ຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

ຄຕຟງ ມີສິດ ດັ່ງນີ້:

1. ອອກຂໍ້ຕົກລົງກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານຂໍ້ມູນຕ້ານການຟອກເງິນ;

2. ຄົ້ນຄວ້າ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການໃຫ້ການຊ່ວຍເຫຼືອ ແລະ ສະເໜີຕໍ່ລັດຖະບານ ໃຫ້ມີມາດຕະການນຳໃຊ້ກົດໝາຍ, ແຜນການ, ກົນໄກ ຫຼື ນິຕິກຳທີ່ໄດ້ວາງອອກໃນຂົງເຂດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຂອບເຂດທົ່ວປະເທດ;

3. ສະເໜີນາຍົກລັດຖະມົນຕີແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ;

4. ຕິດຕາມ, ກວດກາ ແລະ ປະເມີນຜົນສະພາບລວມ ການຈັດຕັ້ງປະຕິບັດວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນແຕ່ລະໄລຍະ ແລ້ວນຳສະເໜີ ຕໍ່ລັດຖະບານ;

5. ນຳໃຊ້ມາດຕະການທາງບໍລິຫານຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດນິຕິກຳກ່ຽວກັບການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

6. ປະຕິບັດສິດອື່ນໆ ຕາມກຳນົດໄວ້ໃນນິຕິກຳ ແລະ ການມອບໝາຍຂອງລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ຄະນະກຳມະການແຫ່ງຊາດເພື່ອຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ມີສຳນັກງານຂໍ້ມູນຕ້ານການຟອກເງິນ ເປັນກົງຈັກຊ່ວຍວຽກ. ນອກນັ້ນ ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຍັງມີຄະນະອະນຸກຳມະການຊ່ວຍວຽກ ຄື: ອະນຸກຳມະການຍຸດທະສາດ, ກົດໝາຍ ແລະ ໂຄສະນາເຜີຍແຜ່ວຽກງານ ຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຄະນະອານຸກຳມະການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ, ນິຕິບຸກຄົນ ແລະ ອົງການບໍ່ຫວັງຜົນກຳໄລ ແລະ ຄະນະອານຸກຳມະການດຳເນີນຄະດີອາຍາ ຊຶ່ງໄດ້ກຳນົດໃນລະບຽບການສະເພາະ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

| | |
|---|---|
| 1. ທ່ານ ຮອງນາຍົກລັດຖະມົນຕີ | ເປັນປະທານ; |
| 2. ທ່ານ ຜູ້ວ່າການທະນາຄານແຫ່ງ ສປປ ລາວ | ເປັນຮອງປະທານ, ທັງເປັນຜູ້ປະຈຳການ; |
| 3. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ | ເປັນຮອງປະທານ; |
| 4. ທ່ານ ຮອງລັດຖະມົນຕີ ກະຊວງການເງິນ | ເປັນຮອງປະທານ; |
| 5. ທ່ານ ຮອງລັດຖະມົນຕີ ກະຊວງຍຸຕິທຳ | ເປັນຄະນະ; |
| 6. ທ່ານ ຮອງລັດຖະມົນຕີ ກະຊວງການຕ່າງປະເທດ | ເປັນຄະນະ; |
| 7. ທ່ານ ຮອງລັດຖະມົນຕີ ກະຊວງອຸດສະຫະກຳ ແລະ ການຄ້າ | ເປັນຄະນະ; |
| 8. ທ່ານ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | ເປັນຄະນະ; |
| 9. ທ່ານ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ | ເປັນຄະນະ; |
| 10. ທ່ານ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ສິ່ງແວດລ້ອມ | ເປັນຄະນະ; |
| 11. ທ່ານ ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ | ເປັນຄະນະ, ທັງເປັນເລຂາ. |

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

ຄຕຟງ ເຄື່ອນໄຫວວຽກງານຕາມຫຼັກການລວມສູນປະຊາທິປະໄຕ, ປຶກສາຫາລື ແລະ ຕົກລົງວຽກງານເປັນໝູ່ຄະນະ, ປະຕິບັດລະບອບຫົວໜ້າດຽວ ບົນພື້ນຖານແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ, ທຸກ

ການເຄື່ອນໄຫວ ຂອງ ຄຕຟງ ແມ່ນອີງຕາມລະບຽບກົດໝາຍ ແລະ ຫຼັກການລວມຂອງລັດຖະບານ ນໍາເອົາແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນເປັນຈິງ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

ຄຕຟງ ແມ່ນໃຫ້ປະຕິບັດຕາມລະບອບປະຊຸມ, ກອງປະຊຸມຄະນະກໍາມະການດັ່ງກ່າວ ປະກອບດ້ວຍກອງປະຊຸມສາມັນ ແລະ ວິສາມັນ. ກອງປະຊຸມສາມັນເປີດຂຶ້ນສອງຄັ້ງຕໍ່ປີ, ໃນກໍລະນີວຽກຈໍາເປັນ ແລະ ຮີບດ່ວນສາມາດເປີດກອງປະຊຸມວິສາມັນເວລາໃດກໍໄດ້ ຕາມການສະເໜີ ຂອງຮອງປະທານ ຜູ້ປະຈໍາການ. ກອງປະຊຸມແຕ່ລະຄັ້ງໄຂຂຶ້ນໄດ້ ກໍຕໍ່ເມື່ອມີຄະນະກໍາມະການເຂົ້າຮ່ວມຫຼາຍກ່ວາເຄິ່ງໜຶ່ງ ຂອງຈໍານວນຄະນະກໍາມະການທັງໝົດ. ກອງປະຊຸມ ຄຕຟງ ຕົກລົງບັນຫາໂດຍອີງໃສ່ສຽງສ່ວນຫຼາຍ ຂອງຜູ້ເຂົ້າຮ່ວມກອງປະຊຸມ. ໃນກໍລະນີມີສຽງເທົ່າກັນ ສຽງປະທານເປັນຜູ້ຕັດສິນ.

ກໍລະນີ ຈໍາເປັນໃຫ້ເຊີນ ຄະນະປະທານສານປະຊາຊົນສູງສຸດ, ຄະນະຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ຄະນະປະທານອົງການກວດກາແຫ່ງລັດ ເພື່ອເຂົ້າຮ່ວມກອງປະຊຸມ ຄຕຟງ ເພື່ອໃນການປຶກສາຫາລື, ຄົ້ນຄວ້າ, ປະສານງານ, ສ້າງ, ປັບປຸງ, ຈັດຕັ້ງປະຕິບັດ ແລະ ນໍາໃຊ້ກົນໄກທີ່ກໍານົດໄວ້ໃນນິຕິກໍາທີ່ກ່ຽວຂ້ອງກັບວຽກງານຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອດໍາເນີນຄະດີອາຍາສະຖານການກະທໍາຜິດທີ່ຕິດພັນກັບ ການກະທໍາຜິດຕົ້ນ, ການຟອກເງິນ, ການກໍ່ການຮ້າຍ, ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມບົດບາດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

## ໝວດທີ 5
## ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບ

**ມາດຕາ 9 ງົບປະມານ**

ງົບປະມານການເຄື່ອນໄຫວວຽກງານ, ປະກອບວັດຖຸເຕັກນິກ, ກໍ່ສ້າງພື້ນຖານໂຄງລ່າງ ແລະ ບໍາລຸງກໍ່ສ້າງບຸກຄະລາກອນ ຂອງຄະນະກໍາມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ສໍານັກງານຂໍ້ມູນຕ້ານການຟອກເງິນ ແມ່ນນໍາໃຊ້ງົບປະມານຂອງລັດ ໃນການເຄື່ອນໄຫວວຽກງານ.

**ມາດຕາ 10 ເຄື່ອງໝາຍ ແລະ ຕາປະທັບ**

ຄຕຟງ ມີເຄື່ອງໝາຍ ແລະ ຕາປະທັບເປັນຂອງຕົນເອງ ເພື່ອນໍາໃຊ້ເຂົ້າໃນວຽກງານທາງລັດຖະການຂອງຕົນ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 11 ການຜັນຂະຫຍາຍ**

ມອບໃຫ້ປະທານຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແບ່ງຄວາມຮັບຜິດຊອບໃຫ້ແກ່ຮອງປະທານ ແລະ ຄະນະກໍາມະການແຕ່ລະທ່ານ ຢ່າງຊັດເຈນ ພ້ອມທັງ ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສໍານັກງານຂໍ້ມູນຕ້ານການຟອກເງິນ ແລະ ບັນດາຄະນະອະນຸກໍາມະການ.

**ມາດຕາ 12 ການຈັດຕັ້ງປະຕິບັດ**

ຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງ

ມະຫາຊົນ, ອົງການປົກຄອງທ້ອງຖິ່ນ ແລະ ບັນດາທ່ານຜູ້ໄດ້ຮັບການແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

**ມາດຕາ 13 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ໃຊ້ປ່ຽນແທນດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄຕຝງ ສະບັບເລກທີ 350/ນຍ, ລົງວັນທີ 14 ຕຸລາ 2016.

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ